**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ

ຫ້ອງການ

ເລກທີ 366..... /ຫກ

ນະຄອນຫຼວງວຽງຈັນ, ວັນທີ 15 ພຶດສະພາ 2026

# ໜັງສືແຈ້ງເຊີນປະມູນ

**ເຖິງ:** ບັນດາບໍລິສັດທີ່ມີຄວາມສົນໃຈ ແລະ ມີເງື່ອນໄຂທີ່ເໝາະສົມ ເຂົ້າຍື່ນຊອງປະມູນ.

**ເລື່ອງ:** ແຈ້ງເຊີນເຂົ້າປະມູນການສະໜອງເຄື່ອງໃຊ້ຫ້ອງການ ແລະ ຊຸບສົມບັດຮັບໃຊ້ບໍລິຫານຫ້ອງການ ໃຫ້ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ.

ຫ້ອງການ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ຂໍແຈ້ງມາຍັງບັນດາບໍລິສັດທີ່ມີຄວາມສົນໃຈ ແລະ ເງື່ອນໄຂທີ່ຈະສະໜອງເຄື່ອງໃຊ້ຫ້ອງການ ແລະ ຊຸບສົມບັດຮັບໃຊ້ບໍລິຫານຫ້ອງການ ໃຫ້ແກ່ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ເພື່ອຍື່ນຊອງປະມູນລາຄາສິນຄ້າ ແລະ ສະເປັກເຄື່ອງຕ່າງໆ ສົ່ງໃຫ້ຄະນະຮັບຜິດຊອບ ຂອງສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

1. ຫ້ອງການ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸດທີ່ເຫມາະສົມ ເຂົ້າຍື່ນຊອງປະມູນ ສໍາລັບການ ສະໜອງສິນຄ້າປະເພດ ເຄື່ອງໃຊ້ຫ້ອງການ, ໂດຍນໍາໃຊ້ງົບປະມານຂອງລັດ ໄລຍະການສະໜອງສິນຄ້າໃຫ້ຄົບ ພາຍໃນ 01 ເດືອນ;
2. ການປະມູນຈະດໍາເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດ ຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບ ການຈັດຕັ້ງ ປະຕິບັດກົດຫມາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸດທີ່ເຫມາະສົມ, ມີໃບອະນຸຍາດດໍາເນີນທຸລະກິດຖືກຕ້ອງ ຕາມກົດຫມາຍ ທີ່ກ່ຽວພັນກັບການສະໜອງສິນຄ້າດັ່ງກ່າວ. ບໍລິສັດທີ່ມີຄຸນນະວຸດທີ່ເຫມາະສົມສົນໃຈສາມາດຕິດຕໍ່ ພົວພັນ ແລະ ກວດກາເບິ່ງເອກະສານປະມູນໄດ້ທີ່ ຫ້ອງການ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ໃນໂມງລັດຖະການ;
4. ບໍລິສັດໃດ ທີ່ຕ້ອງການຊື້ເອກະສານປະມູນຄົບຊຸດເປັນພາສາລາວ ຕ້ອງຍື່ນຫນັງສືສະເໜີຫາ ທີ່ຢູ່ຂ້າງລຸ່ມນີ້, ເລີ້ມ ແຕ່ ວັນທີ 15 ພຶດສະພາ 2026 ເປັນຕົ້ນໄປ, ການປະມູນມີ 02 ປະເພດຄື: ປະເພດຊຸບສົມບັດຮັບໃຊ້ບໍລິຫານຫ້ອງການ ໃນລາຄາ: 1,000,000 ກີບ/ຊອງ ແລະ ປະເພດເຄື່ອງໃຊ້ຫ້ອງການ ໃນລາຄາ: 500,000 ກີບ/ຊອງ. ຈໍານວນເງິນດັ່ງກ່າວນີ້ ຈະບໍ່ມີການ ສົ່ງຄືນ, ວິທີການຊໍາລະຕ້ອງຈ່າຍເປັນເງິນສົດ;
5. ຊອງປະມູນຕ້ອງສົ່ງບໍ່ໃຫ້ກາຍ ໃນເວລາ 10:00 ໂມງ ຂອງວັນທີ 29 ພຶດສະພາ 2026, ທີ່ຫ້ອງ AI/7 ຊັ້ນ 01 ຂອງຕຶກອິນຊີ( ຕຶກທາງໜ້າ ) ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກໍານົດໄວ້ຈະບໍ່ຮັບເອົາ ແລະ ຈະບໍ່ພິຈາລະນາການເປີດຊອງ. ຊອງປະມູນທຸກໆຊອງຈະໄດ້ເປີດໃນ

ເວລາ 10:30 ໂມງຂອງວັນທີ 29 ພຶດສະພາ 2026 ທີ່ ຫ້ອງປະຊຸມຊັ້ນ 2 ຕຶກສິນໄຊ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ໂດຍຊ້ອງໜ້າຄະນະກາມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນຳຕາມສະຖານທີ່ຂ້າງເທິງນີ້;

6. ທຸກໆຊອງປະມູນຕ້ອງໄດ້ ມີຫນັງສືຄ້ຳປະກັນການປະມູນດ້ວຍເງິນສົດ ຫລື ຫນັງສືຄ້ຳປະກັນການປະມູນອອກ ໂດຍທະນາຄານ ບໍ່ໃຫ້ຫລຸດ 2% ຂອງລາຄາສະເຫນີເຂົ້າປະມູນ;
7. ທີ່ຢູ່ ຫ້ອງການ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ (ພະແນກການເງິນ ຫ້ອງການ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ)

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ເຂົ້າຮ່ວມປະມູນຕາມແຈ້ງເຊີນດ້ວຍ.

**ຫົວໜ້າຫ້ອງການ**

ພອງສະໄໝ ບຸນມະນີວອນ

❖ **ໝາຍເຫດ:**

**ລາຍລະອຽດສອບຖາມເພີ່ມເຕີມ ພະແນກການເງິນ, ຫ້ອງການ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ**
**ສະຫາຍ ພອນທະວີ ປອງມະນີວັນ , ເບີໂທ: 020 5451 9593.**
**ສະຫາຍ ນາງ ຈັນອິບ ຊາມິນຕີ, ເບີໂທ: 020 2240 5356 .**